**ບົດກ່າວເປີດກອງປະຊຸມ**

ໂດຍ ທ່ານ ດຣ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ
ຕໍ່ກອງປະຊຸມຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ

**7 ມິຖຸນາ 2017, ເວລາ 9:00 ໂມງ, ທີ່ ຫ້ອງປະຊຸມຊັ້ນ 6 ກະຊວງ ຜທ**

**-------------------**

- ຮຽນ ບັນດາທ່ານ ຮອງລັດຖະມົນຕີ, ກະຊວງຂະແໜງການທີ່ກ່ຽວຂ້ອງ;
- ຮຽນບັນດາທ່ານ ຫົວໜ້າກົມ/ຮອງຫົວໜ້າກົມ ແລະ ຜູ້ຕາງໜ້າຈາກກະຊວງ ຂະແໜງການ;
- ບັນດາທ່ານແຂກທີ່ມີກຽດ, ທ່ານຍິງ ແລະທ່ານຊາຍ.

ໂດຍໄດ້ຮັບການມອບໝາຍຈາກທ່ານນາຍົກລັດຖະມົນຕີ ຂ້າພະເຈົ້າ ໃນນາມ ຮອງປະທານ ທັງເປັນຜູ້ປະຈໍາການຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ ຂໍສະແດງຄວາມຍິນດີຕ້ອນຮັບ ແລະຂອບໃຈ ບັນດາທ່ານ ທີ່ໄດ້ສະຫຼະເວລາເຂົ້າມາຮ່ວມກອງປະຊຸມຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ ໃນມື້ນີ້.

ຈຸດປະສົງຂອງກອງປະຊຸມ ແມ່ນຈະໄດ້ພ້ອມກັນ ສົນທະນາ, ປຶກສາຫາລື ແລະ ໃຫ້ທິດຊີ້ນໍາ ກ່ຽວກັບ ວຽກງານຈຸດສຸມ ຂອງຂະບວນການໂຕະມົນ ເປັນຕົ້ນແມ່ນ ການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈໍາປີ 2016 ທີ່ໄດ້ຈັດຂຶ້ນໃນທ້າຍປີ 2016 ທີ່ຜ່ານມາ, ແຜນວຽກຂອງຂະບວນການໂຕະມົນ ປະຈໍາປີ 2017.

ຄືດັ່ງທີ່ບັນດາທ່ານ ໄດ້ຮັບຮູ້ນໍາກັນແລ້ວວ່າ ຂະບວນການໂຕະມົນ ແມ່ນກົນໄກລະດັບຊາດທີ່ສໍາຄັນ ໃນການເພີ່ມທະວີ ປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ເຊິ່ງຂະບວນການດັ່ງກ່າວ ນອກຈາກຈະເປັນການລະດົມທຶນຮອນເພື່ອມາສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ ແລ້ວຍັງແມ່ນ ເວທີໃນການສ້າງຄວາມເຂົ້າອົກເຂົ້າໃຈ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ກ່ຽວກັບ ຍຸດທະສາດ ແລະນະໂຍບາຍຕ່າງໆ ທີ່ຕິດພັນກັບວຽກງານການພັດທະນາ ໃນ ສປປ ລາວ.

ປີ 2016 ທີ່ ແຂວງ ວຽງຈັນ ໃນ ວັນທີ່ 24-25 ພະຈິກ ທີ່ຜ່ານມາ ພວກເຮົາຮ່ວມກັບຄູ່ຮ່ວມພັດທະນາ ໄດ້ຈັດ ກອງປະຊຸມໂຕະມົນປະຈໍາ 2016 ພາຍໃຕ້ຫົວຂໍ້ **<u>"ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເພື່ອນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະບັນລຸເປົ້າໝາຍການພັດທະນາແບບຍືນຍົງ</u>**".

ເຊິ່ງໃນກອງປະຊຸມດັ່ງກ່າວ ໄດ້ເນັ້ນໃສ່ການປຶກສາຫາລືໃນ 4 ຫົວຂໍ້ ຫລັກຄື:

1. ການເຊື່ອມສານ ແລະການຈັດຕັ້ງປະຕິບັດ ວາລະການພັດທະນາແບບຍືນຍົງຮອດປີ 2030 ລວມທັງເປົ້າໝາຍການພັດທະນາແບບຍືນຍົງ **(SDGs)**;
2. ການເຕີບໂຕສີຂຽວ, ການປ່ຽນແປງດິນຟ້າອາກາດ ແລະການກຽມຄວາມພ້ອມຮັບມືກັບໄພພິບັດ;
3. ການຄໍ້າປະກັນສະບຽງອາຫານ ແລະໂພຊະນາການ; ແລະ
4. ການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິຜົນ (ແຜນດໍາເນີນງານຖະແຫຼງການວຽງຈັນ II)

ພ້ອມດຽວກັນນີ້, ກອງປະຊຸມຍັງໄດ້ຮັບຮອງເອົາ **<u>ແຜນດໍາເນີນງານຖະແຫຼງການວຽງຈັນສະບັບທີ II ວ່າດ້ວຍການເປັນຄູ່ຮ່ວມງານເພື່ອການພັດທະນາທີ່ມີປະສິດທິຜົນ.</u>**

ພາຍຫລັງກອງປະຊຸມດັ່ງກ່າວ, ກະຊວງ ແຜນການ ແລະການລົງທຶນ, ໃນນາມກອງເລຂາຂອງ ຂະບວນການໂຕະມົນ ໄດ້ສັງລວມຜົນຂອງການປຶກສາຫາລື ແລະສົນທະນາ ແລະລາຍງານ ຕໍ່ລັດຖະບານ ກໍ່ຄືຫ້ອງການສໍານັກງານນາຍົກລັດຖະມົນຕີ, ແລະກໍ່ມີ ແຈ້ງການ ສະບັບເລກທີ່ 149/ຫສນຍ.ກລຂ, ລົງວັນທີ່ 27 ມັງກອນ 2017 ກ່ຽວກັບທິດຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2016 ດັ່ງກ່າວ.

ສະນັ້ນ, ມື້ນີ້ ພວກເຮົາຈຶ່ງໄດ້ຈັດກອງປະຊຸມນີ້ຂຶ້ນ ເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງຜັນຂະຫຍາຍແຈ້ງການດັ່ງກ່າວ ແລະປຶກສາຫາລືກ່ຽວກັບທິດທາງແຜນການ ສໍາລັບກອງປະຊຸມໂຕະມົນປະຈໍາປີ 2017.

ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງສະເໜີ ມາຍັງບັນດາທ່ານ ທີ່ເຂົ້າຮ່ວມ ກອງປະຊຸມໃນມື້ນີ້ ຈົ່ງພ້ອມກັນ ປະກອບຄໍາຄິດຄໍາເຫັນຢ່າງກົງໄປກົງມາ ແລະມີລັກສະນະແບບສ້າງສັນ ເພື່ອເຮັດແນວໃດໃຫ້ກອງປະຊຸມໂຕະມົນປະຈໍາປີ 2017 ໃຫ້ໄດ້ຮັບໝາກຜົນຢ່າງຈົບງາມ

ແລະ ເພີ່ມທະວີການມີສ່ວນຮ່ວມຂອງທຸກພາກສ່ວນ ເປັນຕົ້ນ ພາກລັດ ແລະຄູ່ຮ່ວມພັດທະນາ ເພື່ອຮັບປະກັນປະສິດທິຜົນ ແລະຄວາມຍືນຍົງ ຂອງການພັດທະນາ.

ທ້າຍສຸດນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສໍາເລັດໃນໜ້າທີ່ການງານ. ຂໍຖືໂອກາດນີ້ ກ່າວເປີດກອງປະຊຸມຄະນະຊີ້ນໍາລະດັບຊາດເພື່ອຂະບວນການໂຕະມົນ ຢ່າງເປັນທາງການ.

ຂໍຂອບໃຈ.